


## ປະຫວັດຄວາມເປັນມາຂອງຊົນເຜົ່າບິດ

ປະຫວັດຄວາມເປັນມາຂອງຊົນເຜົ່າບິດ ແຂວງອຸດົມໄຊ ແມ່ນຊົນເຜົ່າຫນຶ່ງທີ່ນອນຢູ່ໃນກຸ່ມພາສາ ປາກເວົ້າ ມອນ-ຂະແມ, ຊົນເຜົ່າບິດ ໄດ້ຍ້າຍເຂົ້າມາສ້າງບ້ານແປງເມືອງໃນພື້ນແຜ່ນດິນລາວແມ່ນໄລຍະດຽວກັນ ກັບເຜົ່າກຶມມຸ, ເຜົ່າບິດ ແລະ ເຜົ່າກຶມມຸ ແມ່ນອ້າຍ ນ້ອງເກີດຮ່ວມອຸທອນດຽວກັນ ດ້ວຍເຫດນັ້ນເຜົ່າບິດ ຈຶ່ງສາມາດຮູ້ພາສາປາກເວົ້າຂອງເຜົ່າກຶມມຸ ໄວດີກ່ວາຊົນເຜົ່າອື່ນໆ, ແຕ່ກົງກັນຂ້າມ ຊົນເຜົ່າກຶມມຸ ພັດບໍ່ຮູ້ພາສາຂອງເຜົ່າບິດຈັກ ຄວາມເລີຍ, ຊົນເຜົ່າບິດຢູ່ ແຂວງອຸດົມໄຊ ມີຢູ່ສອງບ້ານຄື: ບ້ານນ້ຳປອກ ແລະ ບ້ານນ້ຳແດງ ເມືອງນາຫມໍ້.

ຊື່ເອີ້ນ: ຊົນເຜົ່າອື່ນເອີ້ນເຂົາເຈົ້າວ່າ: ຂ້າບິດ ຫຼື ລາວພິດ ສ່ວນເຂົາເຈົ້າເອງແມ່ນມັກຊື່ເອີ້ນ ເຜົ່າບິດເທົ່ານັ້ນ, ຄຳທີ່ວ່າ ຊົນເຜົ່າບິດແມ່ນມີຄວາມຫມາຍວ່າ ຊົນເຜົ່າໃຫມ່ທີ່ເກີດຈາກຊົນເຜົ່າທີ່ເປັນອ້າຍມາເປັນຊົນເຜົ່າ ໃຫມ່ຕື່ມອີກ.

ພາສາ: ຊົນເຜົ່າບິດ ມີພາສາປາກເວົ້າເປັນຂອງເຜົ່າ ຕົນເອງໂດຍສະເພາະ ແລະ ໄດ້ຈັດເຂົ້າ ໃນຫມວດພາສາ ມອນ-ຂະແມ, ເນື່ອເປັນແນວນັ້ນພາສາປາກເວົ້າຂອງຊົນເຜົ່າບິດຫຼາຍ ສັບ, ຫຼາຍປະໂຫຍກຄ້າຍຄືພາສາປາກເວົ້າ ຂອງຊົນເຜົ່າກຶມມຸ, ຊົນເຜົ່າລະເມດ ແລະ ຊົນເຜົ່າສາມຕ່າວ ແລະ ກໍ່ມີບາງຄຳສັບ ແມ່ນແຕກຕ່າງກັບຊົນ ເຜົ່າກຶມມຸຢ່າງຂາດຂັ້ນເຊັ່ນ: ຄຳວ່າພໍ່ ຊົນເຜົ່າກຶມມຸວ່າ ຍົງ ແຕ່ຊົນເຜົ່າບິດວ່າ ໂອຍ ຫຼື ຄຳສັບວ່າ ແມ່ ກຶມມຸວ່າ ມະ, ແຕ່ຊົນເຜົ່າບິດວ່າ ແມະ ຄຳສັບວ່າ ກິນເຂົ້າ ກຶມມຸວ່າ ເປີມະ, ຊົນເຜົ່າບິດວ່າ ແຕະຕຸ ແລະ ຄຳສັບ ທີ່ວ່າ ດື່ມນ້ຳ" ເຜົ່າກຶມມຸວ່າ ເອື້ອກອົ້ມ, ເຜົ່າບິດເວົ້າວ່າ ຕົງອອນ ແລະ ອື່ນໆ. ຊົນເຜົ່າບິດມີແຕ່ພາສາປາກເວົ້າເທົ່ານັ້ນ ບໍ່ມີ ຕົວຫນັງສືຂຽນເປັນຂອງຊົນເຜົ່າຕົນເທື່ອ.

ຄວາມເຊື່ອຖື, ຮີດຄອງປະເພນີ ແລະ ວັດທະນະທຳ-ສັງຄົມຂອງຊົນເຜົ່າບິດ: ຊົນເຜົ່າບິດກໍ່ຄືຊົນເຜົ່າອື່ນໆ ທີ່ນອນໃນ ຫມວດພາສາ ມອນ-ຂະແມ ລ້ວນແຕ່ເຊື່ອຖືບັນພະບູຣຸດຂອງຕົນ ເປັນຕົ້ນແມ່ນ: ຜີພໍ່, ຜີແມ່, ຜີເຮືອນ, ຜີບ້ານ, ຜີເມືອງ, ແຕ່ລະ ຄົວເຮືອນຂອງເຜົ່າບິດລ້ວນແຕ່ມີຮ້ານຜີ (ຜີ້ງຜີ) ເພື່ອເຄົາລົບບູຊາບັນ ພະບູຣຸດຂອງຕົນ ໃນວັນທີ່ສຳຄັນຕ່າງໆ. ຊົນເຜົ່າບິດຢູ່ ບ້ານນ້ຳປອກ ແລະ ບ້ານນ້ຳແດງເມືອງນາຫມໍ້ ແຂວງອຸດົມໄຊ ນັບຖືຕະກຸນເຊື້ອສາຍທາງພໍ່ ແລະ ທາງແມ່ ສຳຄັນຄືກັນ ແລະ ສືບທອດຕະກຸນທາງພໍ່ ແລະ ທາງແມ່ເທົ່ານັ້ນ, ເປັນຫຍັງຈຶ່ງເວົ້າແບບນີ້, ເພາະໄດ້ສຳພາດຕົວຈິງ, ບ່າວສາວທີ່ແຕ່ງດອງກັນແລ້ວລູກເກີດອອກມາຖ້າແມ່ນລູກຊາຍແມ່ນໃຫ້ເອົາຕະກຸນທາງພໍ່, ຖ້າແມ່ນລູກຍິງແມ່ນໃຫ້ເອົາຕະກຸນທາງແມ່ ເຂົາເຈົ້າຍັງໄດ້ອະທິບາຍວ່າ ຖ້າຜູ້ໃດກໍ່ຕາມເອົາຕະກຸນຂອງພໍ່ໝົດຕະກຸນຂອງແມ່ກໍ່ຈະຄ່ອຍໆຫມົດໄປ. ດັ່ງນັ້ນ, ຈຶ່ງມີການແບ່ງປັນກັນແນວນັ້ນ. ສະແດງເຖິງບົດບາດຂອງຍິງ-ຊາຍ ໃນເຜົ່າບິດ ແມ່ນຈະແຈ້ງທີ່ສຸດ ຊົນເຜົ່າບິດ ມີປະເພນີການສ້າງຄອບຄົວແບບ ຜົວດຽວ, ເມຍດຽວ ແມ່ນລະບົບຄອບຄົວດຽວ, ຊົນເຜົ່າບິດຂອງສອງບ້ານດັ່ງກ່າວປະກອບດ້ວຍຫຼາກຫຼາຍຕະກຸນ ແລະ ຫຼາກຫຼາຍຊີ່ຊາວທີ່ແຕກຕ່າງກັນຄື: ເສືອ, ນົກ, ງູ, ເຫງັນ, ໄກ່ ແລະ ພືດຕ່າງໆ.

ຊົນເຜົ່າບິດນິຍົມກັນປຸກເຮືອນຮ້ານ: ກ່ອນຈະປຸກສ້າງເຮືອນຫຼັງຫນຶ່ງຕ້ອງໄດ້ເລືອກສະຖານທີ່ດ້ວຍການສ່ຽງດ້ວຍການຂຸດຂຸມບ່ອນທີ່ຈະຕັ້ງເຮືອນເປັນຮູບ 4 ແຈ ເອົາເຂົ້າສານຫວ່ານລົງໃນຂຸມເອົາໄມ້ ຫຼື ເອົາຫີນອັດ ປາກຂຸມໄວ້ຄັກໆ ມື້ໃຫມ່ມາເປີດເບິ່ງຖ້າເຂົ້າສານທີ່ຫວ່ານລົງຄືເກົ່າ ຫຼື ມີການປ່ຽນແປງຜິດປົກກະຕິບໍ່? ຖ້າກໍລະນີເຂົ້າສານບໍ່ມີຫຍັງແຕະຕ້ອງຄືເກົ່າແມ່ນດີຕັ້ງເຮືອນໄດ້, ຖ້າກໍລະນີເຂົ້າສານຖືກທຳລາຍຊະຊາຍແມ່ນຕ້ອງ ໄດ້ຍົກ ຍ້າຍໄປບ່ອນໃຫມ່. ການປຸກສ້າງເຮືອນກໍ່ຈະແບ່ງເປັນສອງຫ້ອງຄື: ຫ້ອງເບື້ອງໃນແມ່ນຫ້ອງຂອງພໍ່ແມ່ຈະມີເຕົາໄຟໜຶ້ງເຂົ້າ ແລະ ຫ້ອງເບື້ອງນອກຮັບແຂກທົ່ວໄປຈະມີເຕົາໄຟແຕ່ງກິນ, ການຄະລຳແຂກຄົນທາງນອກຈະບໍ່ໄດ້ ເຂົ້າໄປຫ້ອງນອນພໍ່ແມ່ ແລະ ຫ້ອງຂອງຫິ້ງຜີຢ່າງເດັດຂາດ. ເຜົ່າບິດການປຸກສ້າງເຮືອນແມ່ນເປັນລະບຽບໄປ ລວງດຽວກັນຫມົດ. ປະເພນີການເກີດລູກແມ່ນເກີດຢູ່ເຮືອນຄືກັນກັບເຜົ່າກຶມມຸບໍ່ຢູ່ກຳເດືອນ, ຊົນເຜົ່າບິດຈະຄະ ລຳອາຫານການກິນປະເພດຂອງຄາວ, ເຫມັ້ນ ແລະ ຊີ້ນ, ສັດໃຫຍ່ເພາະຢ້ານຈະພິດເດືອນຂອງຜູ້ເປັນແມ່ ແລະ ເດັກນ້ອຍ.

ປະເພນີເວລາມີການສົ່ງສະການ (ມີຄົນຕາຍ): ການຄົບງັນບໍ່ດົນແບບຊົນເຜົ່າກຶມມຸ, ຊົນເຜົ່າບິດ ມີການສົ່ງສະການດ້ວຍວິທີການຂຸດຂຸມຝັງສົບຄົນຕາຍຢູ່ປ່າຊ້າທາງທິດຕາເວັນຕົກຂອງບ້ານຕົນເອງ.

ດ້ານສິນລະປະວັນນະຄະດີ: ແບບພື້ນເມືອງຂອງຊົນເຜົ່າບິດບໍ່ມີຫຍັງເລີຍທີ່ຈະເປັນເອກະລັກຂອງຊົນເຜົ່າເຂົາ ເຈົ້າ. ຖ້າມ່ວນຊື່ນກໍ່ຈະຮ້ອງເພງລາວ, ຂັບລາວ ຫຼື ເຜົ່າລື້ ແລະ ເຜົ່າກຶມມຸ ການນຸ່ງຮົ່ມເອ້ຍ້ອງຂອງຊົນ ເຜົ່າບິດ ບໍ່ມີເຄື່ອງນຸ່ງຮົ່ມທີ່ເປັນເອກະລັກຂອງຊົນເຜົ່າຕົນເອງ, ສ່ວນໃຫຍ່ແມ່ນຈະນຸ່ງຮົ່ມເຄື່ອງທີ່ຊື້ຈາກທ້ອງຕະຫຼາດ, ເຄື່ອງ ດົນຕີພື້ນເມືອງທີ່ເປັນເອກະລັກຂອງຊົນເຜົ່າແມ່ນບໍ່ມີຫຍັງ, ມີແຕ່ໃຊ້ເຄື່ອງດົນຕີຂອງຊົນເຜົ່າທີ່ຢູ່ໃກ້ຄຽງເປັນຕົ້ນຕໍ

ດ້ານເສດຖະກິດ-ສັງຄົມຂອງຊົນເຜົ່າບິດ: ມີອາຊີບຕົ້ນຕໍແມ່ນການເຮັດໄຮ່, ເຮັດນາປູກເຂົ້າຫນຽວ, ອາຊີບ ສຳຮອງແມ່ນ. ການລ້ຽງສັດ: ຫມູ, ຫມາ, ງົວ, ຄວາຍ, ແບ້, ແລະ ສັດປີກ, ນອກຈາກນີ້ແມ່ນປູກພືດ ແລະ ເກັບເຄື່ອງປ່າຂອງດົງ ເພື່ອແລກປ່ຽນເປັນສິນຄ້າຄືກັບຊົນເຜົ່າອື່ນໆ. ຜູ້ຊາຍຂອງຊົນເຜົ່າບິດແມ່ນມີຄວາມຊຳນິຊຳນານໃນວຽກງານຫັດຖະກຳຈັກສານ, ເຄື່ອງໃຊ້ສອຍໃນຄອບຄົວສ່ວນແມ່ຍິງຂອງຊົນເຜົ່າບິດແມ່ນບໍ່ຮູ້ເຮັດວຽກຕ່ຳຫູກທໍໄຫມນເພິ່ນມີແຕ່ອາໄສຊື້ຈາກຕະຫຼາດ ແລະ ຊົນເຜົ່າ ໃກ້ຄຽງມາໃຊ້ເທົ່ານັ້ນ.

ຊົນເຜົ່າບິດ: ຊົນເຜົ່າບິດໂດຍທຳມະຊາດແລ້ວມັກດຳລົງຊີວິດທີ່ຕິດພັນກັບທຳມະຊາດອາໄສການຖາງປ່າເຮັດໄຮ່ເປັນອາຊີບ ແລະ ຊອກຫາເກັບເຄື່ອງປ່າຂອງດົງໄວ້ແລກປ່ຽນສິນຄ້າເທົ່ານັ້ນ ໂດຍທີ່ບໍ່ຫັນລົງສູ່ທົ່ງພຽງ ແລະ ການຜະລິດເປັນສິນຄ້າສົ່ງອອກແຕ່ວ່າບົດບາດຍິງຊາຍຂອງຊົນເຜົ່ານີ້ແມ່ນໄດ້ຖືກຍົກສູງເຫັນໄດ້ຈາກລູກທີ່ເກີດມາຖ້າຫາກແມ່ນລູກຊາຍແມ່ນໃຫ້ໃຊ້ແຊ່ງຊື່ ແລະ ນາມສະກຸນທາງພໍ່. ແຕ່ຖ້າຫາກເປັນລູກຍິງແມ່ນຕ້ອງໄດ້ໃຊ້ແຊ່ງຊື່ ແລະ ນາມສະກຸນ ທາງແມ່.

## History of Bit Ethnic Group

Bit and Khmu ethnic group appeared in the Land of Laos at the same time, it is said that they were from the same group in the past. The majority of Bit people can understand and speak Khmu language. On the other hand, most of the Khmu people don’t understand Bit language. At the moment, Bit people are in two villages such as Nampok and Nam Daeng village in Oudomxay province.

Even in the past until nowadays, people keep calling them Lao bit or Kha bit, but they love to call themselves only “Bit”. The word “Bit” means “new tribe”. They have their own speaking language, but no linguistic writing form. Bit language is identified in the linguistic type of Mon – Khmae language, as many words and phrases are similar to Khmu language.

They have been respecting their own ancestors for centuries. As a rule, a family altar has to be set up in a house in order to give the familt protection. There are several important spirits that they always call when having problems such as spirit (Ghost) of the house, spirit (Ghost) of the parents, spirit (Ghost) of the grandparents, spirit (Ghost) of the village, spirit (ghost) of the river, spirit (Ghost) of the sky, spirit (Ghost) of the forest. These spirits mentioned are believed to be their sacred ancestors of all time. The majority of the Bit people are animists.

House: The location is chosen with great care by an elder, as it important that the location be good enough to their ancestors in order to have a happy family life. Normally, there are 2 rooms – one is the bedroom of the parents, including a small stove inside which is designed for rice cooking only. The second one is dining room designed for visitors. There is also a kitchen outside the house. Visitors are not allowed to enter the bedroom without owner’s permission and not allowed to sleep by sided sleeping position against the door (It means only a dead person will be put or placed like that).

Bit women always give birth at home and some experienced women are in charge of that for assistance. After giving a new born child for only a week, they will start going back to work and will not stay longer.

The funeral does not take long like the other ethnic groups, it sometimes spend only one or two days for a funeral. The corpes will be covered by a mat and buried in the forest near the village or the village cemetery. The family has to stay at home for 10 days and also organize a Baci ceremony for all family members at the same time to drive bad things and problems encountered away in order to have a happy family life in the future.

The main activities for generating cash income for the family are upland “sticky” rice cultivation, corn - maize plantation, natural resource collecting and vegetable planting. Furthermore, livestock is also an activity that helps them a lot in making money every year. The animals they raise are chicken, duck, goose, dog, pig, cow, cattle, buffalo, and goat and so on. They harvest and collect some natural resources like bamboo shoot, cardamom, galangal, wild vegetable and others that can be sold each year in order to sell to local traders or markets. Most of the Bit men are experienced in making handicraft products, as for example basketry and knife making (blacksmith).

Generally, Bit people prefer to make their living in the mountain with the nature by slashing and burning for farming. Furthermore, they collect natural resources in the forest for sale. The gender equality of men is higher than women. The son has to follow the surname of the father for the rest of his life and the daughter follows her mother’s surname.